# ບົດນະໂຍບາຍໂດຍຫຍໍ້
# ການຈຳລອງຜົນກະທົບທີ່ມີຕໍ່ການຂະຫຍາຍຕົວ ແລະ ການຈັດຫາແຫຼ່ງເງິນທຶນສຳລັບການປົກປອງສັງຄົມ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສຈ. ດຣ. ພູເພັດ ກ້ຽວພິລາວົງ,
ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ
ມະຫາວິທະຍາໄລແຫ່ງຊາດລາວ

## ສິ່ງທ້າທາຍທາງດ້ານເສດຖະກິດ

ກ່ອນມີການແຜ່ລະບາດຂອງພະຍາດໂຄວິດ-19, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ບັນລຸອັດຕາການເຕີບໂຕທາງດ້ານເສດຖະກິດໃນລະດັບສູງ ອັນເນື່ອງມາຈາກການຫັນປ່ຽນປະເທດໄປສູ່ເສດຖະກິດການຕະຫຼາດ. ເສດຖະກິດໄດ້ມີການຂະຫຍາຍຕົວ ສະເລ່ຍ 7-8 ເປີເຊັນ ໃນລະຫວ່າງປີ 2003 ຫາ 2019.ເຖິງຢ່າງໃດກໍຕາມ, ການຂະຫຍາຍຕົວທາງດ້ານເສດຖະກິດທີ່ກ່າວມານີ້ອາດຈະບໍ່ມີຄວາມຍືນຍົງໃນໄລຍະຍາວ.

ສິ່ງທຳອິດ ແມ່ນຍ້ອນເສດຖະກິດຂອງລາວເປັນເສດຖະກິດທີ່ເອື່ອຍອີງໃສ່ຂະແໜງຊັບພະຍາກອນທຳມະຊາດເປັນຫຼັກເຊິ່ງສາມາດສ້າງຜົນກະທົບໄລຍະຍາວ ໃນຮູບແບບທີ່ເອີ້ນວ່າ “Dutch disease ຫຼື ພະຍາດດັດຈ໌” (Corden 1984; Corden and Neary 1982). ໃນລຳດັບຕໍ່ມາແມ່ນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຍັງມີອັດຕາຄວາມທຸກຍາກສູງ ແລະ ມີຄວາມແຕກໂຕນດ້ານລາຍຮັບທີ່ເພີ່ມຂຶ້ນ .ການຂະຫຍາຍຕົວທາງດ້ານເສດຖະກິດໃນໄລຍະຜ່ານມາຍັງບໍ່ສາມາດຊ່ວຍຫຼຸດຜ່ອນອັດຕາຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບທາງສັງຄົມໄດ້ຢ່າງມີປະສິດທິຜົນ.

ລຳດັບທີສາມ,ຕົ້ນທຶນທາງດ້ານຊັບພະຍາກອນມະນຸດທີ່ຍັງຂາດແຄນພ້ອມທັງດັດຊະນີການພັດທະນາຊັບພະຍາກອນມະນຸດໂດຍລວມຂອງປະເທດເຫັນວ່າຍັງຕໍ່າ ແລະ ຍັງຢູ່ຂ້າງຫຼັງຂອງປະເທດອື່ນໆໃນສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ (ອາຊຽນ). ລຳດັບທີສີ່,ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຍັງພົບກັບບັນຫາດ້ານໂພຊະນາການທີ່ບໍ່ພຽງພໍ ແລະ ອັດຕາການເຂົ້າໂຮງຮຽນທີ່ຂ້ອນຂ້າງຕໍ່າ.

ເຖິງແມ່ນວ່າ, ອັດຕາການບໍລິໂພກເພີ່ມຂຶ້ນ ແລະອັດຕາຄວາມທຸກຍາກຈະຫຼຸດລົງແລ້ວກໍຕາມ ແຕ່ການຂາດສານອາຫານຍັງເປັນບັນຫາທີ່ຮ້າຍແຮງໂດຍສະເພາະແມ່ນໃນແມ່ຍິງຖືພາ ແລະ ເດັກນ້ອຍ. ການປັບປຸງໂພຊະນາການໃນແມ່ຍິງຖືພາ ແລະ ເດັກນ້ອຍ ຈິ່ງເປັນວຽກງານໜຶ່ງທີ່ສຳຄັນທີ່ສຸດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.ພ້ອມກັນນີ້, ມັນຍັງປະກົດໃຫ້ເຫັນວ່າການແຜ່ລະບາດຂອງພະຍາດໂຄວິດ-19 ຈະສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ການພັດທະນາເສດຖະກິດໃນໄລຍະຍາວ.

ການແຜ່ລະບາດຂອງພະຍາດດັ່ງກ່າວບໍ່ພຽງແຕ່ຈະສົ່ງຜົນກະທົບໂດກົງຕໍ່ເສດຖະກິດຂອງລາວເທົ່ານັ້ນ ແຕ່ຍັງສົ່ງຜົນກະທົບຕໍ່ການຂະຫຍາຍຕົວຂອງເສດຖະກິດໃນໄລຍະຍາວອັນເນື່ອງມາຈາກການຫລຸດລົງຂອງປະສິດຕິຜົນດ້ານແຮງງານແລະ ປະສິດທິຜົນມວນລວມ. ຜົນການສຶກສາແບບທົດລອງເອົາທິດສະດີມາປະຕິບັດ (Empirical studies) ໄດ້ສະແດງໃຫ້ເຫັນວ່າ ຜົນກະທົບສະສົມຂອງໂຄວິດ-19 ຕໍ່ກັບການຂະຫຍາຍຕົວຂອງຜະລິດຕະພັນພາຍໃນ (GDP) ແມ່ນຢູ່ທີ່-25.36 ເປີເຊັນໃນໄລຍະ 28 ປີ - ຫຼື ປະມານ -0.91 ເປີເຊັນຕໍ່ປີ (Kyophilavong,forthcoming).

ຍິ່ງໄປກວ່ານັ້ນ,ການລະບາດຂອງພະຍາດໂຄວິດ-19ຍັງເຮັດໃຫ້ຜົນຜະລິດດ້ານອຸດສາຫະກຳ,ລາຍຮັບຂອງຄົວເຮືອນ, ລາຍຈ່າຍຂອງຄົວເຮືອນ ແລະ ສະຫວັດດີການຫຼຸດລົງທັງໝົດນີ້ຈະມີຜົນກະທົບໄລຍະຍາວຕໍ່ການກັບຂະຫຍາຍຕົວທາງດ້ານເສດຖະກິດ.

[1] The Dutch disease ໝາຍເຖິງການຂະຫຍາຍຕົວຂອງຊັບພະຍາກອນທຳມະຊາດ (ນ້ຳມັນ, ອາຍແກັສ, ແຮ່ທາດ, ແລະ ອື່ນໆ) ທີ່ເຮັດໃຫ້ການຫຼຸດລົງຂອງຂະແໜງການອື່ນໆ (ການຜະລິດ ຫຼື ກະສິກຳ), ເຊິ່ງເຮັດໃຫ້ການເຕີບໂຕຂອງເສດຖະກິດຫຼຸດລົງ.

## ເຫດຜົນໃນການລົງທຶນໃສ່ການປົກປ້ອງສັງຄົມ

ຕົ້ນທຶນທາງດ້ານຊັບພະຍາກອນມະນຸດເປັນເຄື່ອງຈັກຂັບເຄື່ອນການຂະຫຍາຍຕົວຂອງເສດຖະກິດ. ເພາະສະນັ້ນຈຶ່ງມີຄວາມເຊື່ອໂດຍທົ່ວໄປວ່າການຍົກລະດັບຄວາມສາມາດຂອງປະຊາຊົນໃນການຮັບເອົາຂໍ້ມູນຂ່າວສານ,ຖອດລະຫັດ ແລະ ການສ້າງຄວາມເຂົ້າໃຈຕໍ່ກັບຂໍ້ມູນຂ່າວສານຈຶ່ງເປັນສິ່ງທີ່ຈຳເປັນ (Schultz 1961; Becker 1962). ຕົ້ນທຶນທາງດ້ານຊັບພະຍາກອນມະນຸດທີ່ສະສົມຜ່ານການສຶກສາຈະຊ່ວຍເອື້ອຍອຳນວຍໃຫ້ກັບຄວາມກ້າວໜ້າທາງດ້ານເທັກໂນໂລຊີ ໂດຍຜ່ານການປັບປຸງເທັກໂນໂລຊີທີ່ມີຢູ່ໃນປະຈຸບັນ ຫຼື ພັດທະນາເຕັກໂນໂລຊີໃໝ່ (Romer 1990). ດັ່ງນັ້ນ, ຈາກແນວຄວາມຄິດທາງທິດສະດີກ່ຽວກັບການຂະຫຍາຍຕົວຂອງເສດຖະກິດ ເຫັນໄດ້ຊັດເຈນວ່າ ການລົງທຶນໃນດ້ານສາທາລະນະສຸກ ແລະ ການສຶກສາແມ່ນເປັນບົດບາດທີ່ສຳຄັນໃນການຂະຫຍາຍຕົວຂອງເສດຖະກິດໃນໄລຍະຍາວຂອງບັນດາປະເທດທີ່ພັດທະນາແລ້ວ ແລະ ປະເທດທີ່ກຳລັງພັດທະນາ.

ຜົນຕອບແທນສູງສຸດທີ່ໄດ້ຈາກການລົງທຶນແມ່ນມາຈາກການລົງທຶນໃນດ້ານການສຶກສາໃນທຸກລະດັບ (ຜົນຕອບແທນໂດຍສເລ່ຍ 17 ເປີເຊັນ / ປີ), ການລົງທຶນໃສ່ແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນແມ່ນສຳຄັນທີ່ສຸດ ໂດຍພວກເຂົາໄດ້ຮັບຜົນຕອບແທນຈາກການລົງທຶນດັ່ງກ່າວນີ້ 18 ເປີເຊັນຕໍ່ປີ (Heckman 2008; 2011). ໂພຊະນາການຂອງແມ່ ແລະເດັກ ແມ່ນເປັນຄວາມທ້າທາຍທີ່ສຳຄັນໃນການພັດທະນາບຸກຄົນ ແລະ ປະເທດຊາດ.

ຜົນປະໂຫຍດຈາກການທີ່ແມ່ ແລະ ເດັກໄດ້ຮັບໂພຊະນາການທີ່ດີໄດ້ແກ່ການຫຼຸດລົງຂອງອັດຕາການເຈັບເປັນ ແລະ ອັດຕາການຕາຍຂອງເດັກ; ການພັດທະນາການທາງດ້ານມັນສະໝອງ, ຮ່າງກາຍ ແລະ ເສດຖະກິດ-ສັງຄົມ; ອັດຕາການເຂົ້າໂຮງຮຽນ ແລະ ຄວາມອາດສາມາດໃນການຮຽນຮູ້; ສະຖານະພາບຂອງການເປັນຜູ້ໃຫຍ່; ແລະ ຄວາມສາມາດໃນການເຮັດວຽກ ແລະ ຜະລິດຕະພາບ (The Lancet 2013) ໄດ້ຮັບການປັບປຸງທີ່ດີຂຶ້ນ. ດ້ວຍເຫດຜົນນີ້, ໂພຊະນາການທີ່ດີຂອງແມ່ ແລະ ເດັກ ຈະເປັນປະໂຫຍດຕໍ່ການພັດທະນາບຸກຄົນ ແລະ ພັດທະນາເສດຖະກິດ. ດັ່ງນັ້ນ, ມັນຈຶ່ງເປັນສິ່ງສຳຄັນທີ່ຕ້ອງສະໜອງການປົກປ້ອງສັງຄົມເພື່ອແນໃສ່ການພັດທະນາ ແມ່ຍິງຖືພາ ແລະ ເດັກນ້ອຍ.



# ຄາດຄະເນຜົນກະທົບຂອງການປົກປ້ອງສັງຄົມ

ການສຶກສາຈາກແບບຈໍາລອງຄວາມສົມດູນທົ່ວໄປທີ່ສາມາດຄິດໄລ່ໄດ້ (CGE) ແລະ ຈາກການຈໍາລອງແບບຈຸນລະພາກໄດ້ດໍາເນີນການພາຍໃຕ້ ໂຄງການການຮ່ວມມືຂອງອົງການສະຫະປະຊາຊາດ “ບໍ່ປະຖິ້ມໃຜໄວ້ຂ້າງຫລັງ:ສ້າງພື້ນຖານໃຫ້ແກ່ລະບົບປົກປ້ອງສັງຄົມຂັ້ນພື້ນຖານໃນ ສປປ ລາວ” ເຊິ່ງມັນໄດ້ສະແດງໃຫ້ເຫັນວ່າການປົກປ້ອງສັງຄົມຈະເພີ່ມອັດຕາການເຕີບໂຕຂອງຜະລິດຕະພັນພາຍໃນທີ່ແທ້ຈິງ (GDP) ເປັນ 33.79 ເປີເຊັນ ໃນໄລຍະເວລາ 28 ປີ , ຫຼື ເປັນ 1.21 ເປີເຊັນຕໍ່ປີ (Kyophilavong, forthcoming). ການສຶກສາຍັງສະແດງໃຫ້ເຫັນອີກວ່າການປົກປ້ອງສັງຄົມຈະເພີ່ມຜົນຜະລິດດ້ານອຸດສະຫະກໍາຂຶ້ນ, ຫລຸດການຂາດດູນການຄ້າລົງ ແລະ ເພີ່ມສະຫວັດດີການ ແລະ ລາຍຮັບຄົວເຮືອນຂຶ້ນ.

ນອກຈາກນັ້ນ, ແບບຈໍາລອງຍັງໄດ້ສະແດງໃຫ້ເຫັນວ່າ ການປົກປ້ອງສັງຄົມຈະຊ່ວຍຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເຫມີພາບ ອັດຕາຄວາມທຸກຍາກຫຼຸດລົງ 0.62 ເປີເຊັນ ແລະ ອັດຕາຄວາມບໍ່ສະເໝີພາບຫຼຸດລົງ 0.23 ເປີເຊັນໃນປີທໍາອິດ ແລະ ປີທີສອງຂອງການໃຫ້ການຊ່ວຍເຫຼືອດ້ານການປົກປ້ອງສັງຄົມແກ່ແມ່ຍິງຖືພາ ແລະ ເດັກເກີດໃໝ່ ການປົກປ້ອງສັງຄົມບໍ່ພຽງແຕ່ເພີ່ມລາຍຈ່າຍໃນບັນດາກຸ່ມຄົນທີ່ໄດ້ຮັບຜົນປະໂຫຍດທີ່ກະທົບຕໍ່ການຜະລິດ ແລະ ການເຕີບໂຕຫຼາຍຢ່າງແຕ່ຍັງສົ່ງຜົນກະທົບເຖິງການເພີ່ມຂື້ນຂອງຈໍານວນແຮງງານທີ່ມີສີມື ແລະ ຜະລິດຕະພາບໃນບັນດາຜູ້ອອກແຮງງານມີສີມື ແລະ ບໍ່ມີສີມື.

ໃນເມື່ອບໍ່ມີການປົກປ້ອງທາງສັງຄົມທີ່ພຽງພໍ ແລະ ຍ້ອນຜົນກະທົບໄລຍະຍາວຂອງພະຍາດໂຄວິດ-19, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະປະສົບກັບການຂະຫຍາຍຕົວທາງດ້ານເສດຖະກິດຕໍ່າ (Kyophilavong, forthcoming). ແຕ່ຖ້າລັດຖະບານລົງທຶນໃສ່ການປົກປ້ອງສັງຄົມຢ່າງພຽງພໍ, ປະເທດກໍ່ຈະຟື້ນຕົວຈາກການລະບາດຂອງພະຍາດ ແລະ ເສດຖະກິດກໍຈະຂະຫຍາຍຕົວໃນລະດັບສູງ. ສະນັ້ນ, ການປົກປ້ອງສັງຄົມແມ່ນມີຄວາມສໍາຄັນທີ່ສຸດຕໍ່ກັບການພັດທະນາໃນໄລຍະຍາວຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.



# ແຫຼ່ງເງິນທຶນສຳລັບໂຄງການປົກປ້ອງສັງຄົມ

ຜົນຈາກພາກການທົບທວນທິດສະດີ ໄດ້ສະແດງໃຫ້ເຫັນວ່າ ບັນດາປະເທດທີ່ອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດມັກຈະລະເລີຍການລົງທຶນໃສ່ການສຶກສາ (Gylfason 2001). ດັ່ງນັ້ນ, ຈຶ່ງເຮັດໃຫ້ການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດເຫຼົ່ານັ້ນຊັກຊ້າ ແລະ ຢຸດສະງັກ. (Sachs and Warner 1995; Leite and Weidmann 1999). ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຖືກຈັດອັນດັບໃຫ້ເປັນປະເທດທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດທີ່ສົ່ງອອກແຮ່ທາດແລະ ໄຟຟ້າໄປຍັງປະເທດອື່ນໆ.

ລາຍຮັບຈາກຂະແໜງຊັບພະຍາກອນເຫຼົ່ານີ້ກວມເອົາອັດຕາສ່ວນທີ່ໃຫຍ່ທີ່ສຸດຂອງງົບປະມານຂອງລັດຖະບານ. ສິ່ງທ້າທາຍຕົ້ນຕໍຂອງການຄຸ້ມຄອງລາຍຮັບຈາກຊັບພະຍາກອນທຳມະຊາດເຫຼົ່ານີ້ແມ່ນການນຳໃຊ້ລາຍຮັບທີ່ໄດ້ມາໃຫ້ມີປະສິດທິພາບ ແລະ ປະສິດທິຜົນຫຼາຍຂຶ້ນກວ່າເກົ່າເພື່ອການພັດທະນາໃນໄລຍະຍາວ.ແຕ່ຫຼາຍປະເທດທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດບໍ່ໄດ້ລົງທຶນເຂົ້າໃສ່ໃນຂົງເຂດວຽກງານທີ່ຈຳເປັນເພື່ອຮັບປະກັນການພັດທະນາໃນໄລຍະຍາວ ເຊັ່ນການສຶກສາ, ສາທາລະນະສຸກ ແລະ ພື້ນຖານໂຄງລ່າງ.ປະເທດທີ່ອຸດົມສົມບູນທາງດ້ານຊັບພະຍາກອນສ່ວນໃຫຍ່ໄດ້ສ້າງຕັ້ງກອງທຶນເພື່ອການພັດທະນາ ແລະ ເພື່ອການນຳໃຊ້ໃນກໍລະນີສຸກເສີນ. ຈຸດປະສົງຂອງກອງທຶນນີ້ແມ່ນເພື່ອຫຼຸດຜ່ອນຂອບເຂດຂອງວົງຈອນການໝູນວຽນຂອງງົບປະມານ ແລະ ຄວາມເໜັງຕີງຂອງເສດຖະກິດມະຫາພາກ (Tsani 2013; Truman 2008).

ນອກຈາກນີ້, ກອງທຶນຍັງຫຼຸດຜ່ອນຜົນກະທົບໃນທາງລົບຂອງພະຍາດ Dutch disease (Usui 1996). ຈາກການປະຢັດລາຍຮັບທີ່ໄດ້ຈາກຊັບພະຍາກອນທຳມະຊາດຢ່າງເຫມາະສົມເຂົ້າໃນກອງທຶນທີ່ສ້າງຕັ້ງຂຶ້ນເຮັດໃຫ້ປະເທດສາມາດປ້ອງກັນການແຂງຄ່າຂອງອັດຕາແລກປ່ຽນທີ່ແທ້ຈິງໄດ້ (ເຊັ່ນດຽວກັນກັບການແຂ່ງຂັນທີ່ຫຼຸດລົງເຊິ່ງເປັນຜົນມາຈາກການແຂງຄ່າດັ່ງກ່າວ). ໃນປັດຈຸບັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຍັງບໍ່ມີກອງທຶນພັດທະນາດັ່ງກ່າວ.ລາຍຮັບທັງໝົດທີ່ໄດ້ມາຈາກຂະແໜງຊັບພະຍາກອນແມ່ນໄດ້ນຳໃຊ້ເຂົ້າໃນການເພີ່ມເງິນເດືອນຂອງລັດຖະບານ ແລະ ການກໍ່ສ້າງພື້ນຖານໂຄງລ່າງ, ໂດຍສະເພາະແມ່ນພື້ນຖານໂຄງລ່າງທີ່ຈຳເປັນເຊັ່ນ ເສັ້ນທາງ ແລະ ຂົວ. ສະນັ້ນ, ລັດຖະບານຕ້ອງສ້າງຕັ້ງ "ກອງທຶນພັດທະນາມະນຸດ" ເພື່ອສະໜອງທຶນສຳລັບການປົກປ້ອງສັງຄົມໃນການພັດທະນາ ແມ່ຍິງຖືພາ ແລະ ເດັກນ້ອຍກ່ອນໄວຮຽນ.

ແຫຼ່ງທຶນນີ້ຕ້ອງມາຈາກລາຍຮັບທີ່ໄດ້ຈາກອາກອນ ແລະ ຄ່າສຳປະທານຈາກຂະແໜງຊັບພະຍາກອນ. ຕົວຢ່າງ 20-30 ເປີເຊັນ ຂອງລາຍຮັບທີ່ໄດ້ຈາກຊັບພະຍາກອນທຳມະຊາດທັງຫມົດ (ບໍ່ແຮ່, ໄຟຟ້ານ້ຳຕົກ, ປ່າໄມ້, ແລະ ອື່ນໆ) ສາມາດນຳໄປລົງທຶນໃສ່ "ກອງທຶນພັດທະນາມະນຸດ". ກອງທຶນນີ້ຄວນຕັ້ງຢູ່ໃນຫ້ອງວ່າການລັດຖະບານ ແລະ ຄວນມີປະທານເປັນຂັ້ນນາຍົກລັດຖະມົນຕີ, ສະມາຊິກສະພາຄວນປະກອບມີລັດຖະມົນຕີຈາກກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ແລະ ກະຊວງການເງິນ.

